**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງອຸດົມໄຊ — ເລກທີ: 1690 /ອຊ

ອຸດົມໄຊ, ວັນທີ: 19 ທັນວາ 2023

# ຂໍ້ຕົກລົງ
# ວ່າດ້ວຍ ການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້, ທີ່ດິນປ່າໄມ້, ຕ້ານ ແລະ ສະກັດກັ້ນ ການບຸກລຸກທຳລາຍປ່າໄມ້, ທີ່ດິນປ່າໄມ້ ແລະ ໄຟໄໝ້ລາມປ່າ ຢູ່ແຂວງອຸດົມໄຊ.

- ອີງຕາມ ກົດໝາຍ ວ່າດ້ວຍ ການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍ ວ່າດ້ວຍ ປ່າໄມ້ ສະບັບເລກທີ່ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ຄຳສັ່ງ ຂອງ ນາຍົກລັດຖະມົນຕີ ສະບັບເລກທີ 11/ນຍ, ລົງວັນທີ 21 ກໍລະກົດ 2023 ວ່າດ້ວຍ ການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້, ທີ່ດິນປ່າໄມ້, ຕ້ານ ແລະ ສະກັດກັ້ນ ການບຸກລຸກທຳລາຍປ່າໄມ້, ທີ່ດິນປ່າໄມ້ ແລະ ໄຟໄໝ້ລາມປ່າ.

ເພື່ອເປັນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ຄຳສັ່ງເລກທີ 11/ນຍ, ລົງວັນທີ 21 ກໍລະກົດ 2023 ໃຫ້ມີຄວາມສັກສິດ ແລະ ສອດຄ່ອງກັບສະພາບຕົວຈິງ ຢູ່ ແຂວງອຸດົມໄຊ.

## ເຈົ້າແຂວງ ຕົກລົງ:

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້, ທີ່ດິນປ່າໄມ້, ຕ້ານ ແລະ ສະກັດກັ້ນ ການບຸກລຸກທຳລາຍປ່າໄມ້, ທີ່ດິນປ່າໄມ້ ແລະ ໄຟໄໝ້ລາມປ່າ ຢູ່ພາຍໃນແຂວງອຸດົມໄຊ.

**ມາດຕາ 2 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ເຂົ້າໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້, ທີ່ດິນປ່າໄມ້, ຕ້ານ ແລະ ສະກັດກັ້ນ ການບຸກລຸກທຳລາຍປ່າໄມ້, ທີ່ດິນປ່າໄມ້ ແລະ ໄຟໄໝ້ລາມປ່າ ຢູ່ພາຍໃນແຂວງອຸດົມໄຊ.

**ມາດຕາ 3 ລະບົບການຈັດຕັ້ງ ແລະ ການຊີ້ນຳ**

ໃຫ້ແຕ່ງຕັ້ງຄະນະສະເພາະກິດ ຊີ້ນຳການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ດັ່ງນີ້:

1. ຄະນະສະເພາະກິດ ຂັ້ນແຂວງ: ແມ່ນ ທ່ານ ຮອງເຈົ້າແຂວງ ຜູ້ຊີ້ນຳວຽກງານກະສິກຳ ແລະ ປ່າໄມ້ ເປັນຫົວໜ້າ, ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ ເປັນຮອງ ທັງເປັນຜູ້ປະຈຳການ, ບັນດາຫົວໜ້າພະແນກການ, ອົງການທຽບເທົ່າ, ກອງບັນຊາການ ປກຊ-ປກສ ແລະ ທ່ານເຈົ້າເມືອງ 7 ເມືອງ ເປັນຄະນະ;

2. ຄະນະສະເພາະກິດ ຂັ້ນເມືອງ: ແມ່ນ ທ່ານ ເຈົ້າເມືອງ ເປັນຫົວໜ້າ, ຮອງເຈົ້າເມືອງ ຜູ້ຊີ້ນໍາວຽກງານເສດຖະກິດ ເປັນຮອງ ທັງເປັນຜູ້ປະຈໍາການ, ຫົວໜ້າຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ, ບັນດາຫົວໜ້າຫ້ອງການ, ອົງການທີ່ກ່ຽວຂ້ອງ, ກອງບັນຊາການ ປກຊ-ປກສ ເມືອງ ແລະ ນາຍບ້ານແຕ່ລະບ້ານ ເປັນຄະນະ;
3. ຄະນະສະເພາະກິດ ຂັ້ນບ້ານ: ແມ່ນ ນາຍບ້ານ ເປັນຫົວໜ້າ, ຮອງນາຍບ້ານ ຜູ້ຊີ້ນໍາວຽກງານເສດຖະກິດ ເປັນຮອງ, ຫົວໜ້າປ່າໄມ້ບ້ານ, ບັນດາອົງການຈັດຕັ້ງທີ່ກ່ຽວຂ້ອງ ຂັ້ນບ້ານ ເປັນຄະນະ.

**ມາດຕາ 4 ການຜັນຂະຫຍາຍ ແລະ ເຜີຍແຜ່-ເຊື່ອມຊຶມ**

ໃຫ້ບັນດາພະແນກການ, ອົງການຈັດຕັ້ງທຸກພາກສ່ວນ, ກອງບັນຊາການ ປກຊ-ປກສ ແລະ ອົງການປົກຄອງເມືອງ 7 ເມືອງ ເປັນເຈົ້າການ ຜັນຂະຫຍາຍ ແລະ ເຜີຍແຜ່-ເຊື່ອມຊຶມ ຂໍ້ຕົກລົງສະບັບນີ້ ແລະ ຄໍາສັ່ງ ຂອງນາຍົກລັດຖະມົນຕີ ສະບັບເລກທີ 11/ນຍ, ລົງວັນທີ 21 ກໍລະກົດ 2023 ໃຫ້ແກ່ພະນັກງານ, ທະຫານ, ຕໍາຫຼວດ, ຜູ້ປະກອບການ ແລະ ປະຊາຊົນ ຮັບຮູ້-ເຂົ້າໃຈ ຢ່າງເລິກເຊິ່ງ ດ້ວຍຫຼາຍຮູບແບບ, ຫຼາຍວິທີການ. ໂດຍຖືເອົາວຽກງານດັ່ງກ່າວ ເປັນໜ້າທີ່ການເມືອງ, ເປັນຕົວຊີ້ວັດຕໍ່ຜົນໄດ້-ຜົນເສຍ ໃນການຊີ້ນໍາ-ນໍາພາ ຂອງຄະນະພັກທຸກຂັ້ນ.

**ມາດຕາ 5 ການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນໍາໃຊ້ປ່າໄມ້, ທີ່ດິນປ່າໄມ້**

1. ໃຫ້ພະແນກກະສິກໍາ ແລະ ປ່າໄມ້ ສົມທົບກັບ ພະແນກການ, ຂະແໜງການ, ຫ້ອງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ກວດກາຄືນ ເຂດແດນປ່າໄມ້, ທີ່ດິນປ່າໄມ້ ແຕ່ລະປະເພດ ຢູ່ພາຍໃນແຂວງ ໃຫ້ລະອຽດ ພ້ອມທັງ ຮີບຮ້ອນ ດໍາເນີນການສໍາຫຼວດ ແລະ ວາງແຜນຄຸ້ມຄອງໃຫ້ຖືກຕ້ອງ ແລະ ສອດຄ່ອງ ຕາມກົດໝາຍ ແລະ ລະບຽບການ ໂດຍການມີສ່ວນຮ່ວມຂອງທຸກພາກສ່ວນ. ພ້ອມດຽວກັນນັ້ນ ໃຫ້ສືບຕໍ່ຈັດສັນ, ກໍານົດຂອບເຂດແດນປ່າໄມ້ 3 ປະເພດປ່າ ພ້ອມທັງຕິດປ້າຍ ແລະ ປັກຫຼັກໝາຍເຂດ ໃຫ້ຈະແຈ້ງ.

   ນອກຈາກນັ້ນ ໃຫ້ສືບຕໍ່ກວດກາ ແລະ ປັບປຸງຄືນແຜນທີ່ຈັດສັນທີ່ດິນ ແລະ ແບ່ງດິນ-ແບ່ງປ່າ ຢູ່ບັນດາບ້ານ ທີ່ນອນຢູ່ໃນ 3 ປະເພດປ່າ ໃຫ້ລະອຽດ ເປັນຕົ້ນ ແມ່ນຢູ່ເຂດປ່າສະຫງວນແຫ່ງຊາດ ພູຫີຜີ, ປ່າສະຫງວນພູໂຫ້ ແລະ ເຂດອື່ນໆ ເພື່ອຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນໍາໃຊ້ປ່າໄມ້ ຕາມທິດສີຂຽວ ແລະ ຍືນຍົງ;
2. ໃຫ້ພະແນກກະສິກໍາ ແລະ ປ່າໄມ້ ສ້າງແຜນຍຸດທະສາດ ແລະ ແຜນປົກປັກຮັກສາ, ແຜນນໍາໃຊ້ ແລະ ແຜນຄຸ້ມຄອງປ່າໄມ້ ແລະ ທີ່ດິນປ່າໄມ້, ຕ້ານ ແລະ ສະກັດກັ້ນ ການບຸກລຸກທໍາລາຍປ່າໄມ້ ແລະ ທີ່ດິນປ່າໄມ້ ແລະ ໄຟໄໝ້ລາມປ່າ ຢູ່ແຂວງອຸດົມໄຊ;
3. ໃຫ້ພະແນກກະສິກໍາ ແລະ ປ່າໄມ້ ເປັນເຈົ້າການ ສົມທົບກັບ ພະແນກການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ຈັດສັນພູມລໍາເນົາຄົງທີ່, ເຂດທໍາການຜະລິດກະສິກໍາ ຕິດພັນກັບການກໍານົດວິທີການ ແລະ ສົ່ງເສີມຮູບແບບການຜະລິດ ທີ່ໝັ້ນຄົງ ໃຫ້ປະຊາຊົນບັນດາເຜົ່າ ທີ່ອາໄສໃນເຂດຊົນນະບົດ ໂດຍສະເພາະ ຢູ່ເຂດປ່າສະຫງວນແຫ່ງຊາດ, ປ່າປ້ອງກັນ ແລະ ປ່າຜະລິດ ເພື່ອປັບປຸງຊີວິດການເປັນຢູ່, ແກ້ໄຂຄວາມທຸກຍາກ ແລະ ຢຸດຕິບັນຫາການເຄື່ອນຍ້າຍຕັ້ງຖິ່ນຖານ ພູມລໍາເນົາຂອງປະຊາຊົນ ແບບຊະຊາຍ;
4. ໃຫ້ພະແນກແຜນການ ແລະ ການລົງທຶນ ເປັນໃຈກາງ ສົມທົບກັບ ພະແນກການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ກໍານົດແຜນພັດທະນາໃນແຕ່ລະເຂດ ຕາມທ່າແຮງ ແລະ ເງື່ອນໄຂຈຸດພິເສດ ຂອງແຕ່ລະທ້ອງຖິ່ນ ເພື່ອຮັບຮອງການເຄື່ອນຍ້າຍຂອງພົນລະເມືອງ ຕິດພັນກັບ ການພັດທະນາອາຊີບໃໝ່ ທີ່ໝັ້ນຄົງ ປ່ຽນແທນອາຊີບ ທີ່ອາໄສກະສິກໍາ ເປັນຕົ້ນຕໍ;
5. ໃຫ້ບັນດາພະແນກການ, ອົງການຈັດຕັ້ງທຸກພາກສ່ວນ, ກອງບັນຊາການ ປກຊ-ປກສ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນ ສືບຕໍ່ເປັນເຈົ້າການຈັດຕັ້ງປະຕິບັດ ຄໍາສັ່ງເລກທີ 15/ນຍ, ລົງວັນທີ 13

ພຶດສະພາ 2016 ວ່າດ້ວຍ ການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ ແລະ ກວດກາການຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້ ຢູ່ພາຍໃນແຂວງ ໃຫ້ເຂັ້ມງວດ.

**ມາດຕາ 6 ຕ້ານ ແລະ ສະກັດກັ້ນ ການບຸກລຸກທຳລາຍປ່າໄມ້, ທີ່ດິນປ່າໄມ້ ແລະ ໄຟໄໝ້ລາມປ່າ**

1. ໃຫ້ສ້າງແຜນດຳເນີນງານ, ແຜນງົບປະມານໃຊ້-ຈ່າຍ ໃນການເຄື່ອນໄຫວວຽກງານ ຕ້ານ ແລະ ສະກັດກັ້ນ ການບຸກລຸກທຳລາຍປ່າໄມ້, ທີ່ດິນປ່າໄມ້ ແລະ ໄຟໄໝ້ລາມປ່າ ຢູ່ຂັ້ນແຂວງ ແລະ ບັນດາເມືອງ ໃນແຕ່ລະປີ ໃຫ້ເປັນອັນລະອຽດ;
2. ໃຫ້ກະກຽມຄວາມພ້ອມ ບຸກຄະລາກອນ, ງົບປະມານ, ພາຫະນະ, ເຄື່ອງມື ແລະ ອຸປະກອນຮັບໃຊ້ທີ່ຈຳເປັນ ໃນການເຄື່ອນໄຫວວຽກງານ ຕ້ານ ແລະ ສະກັດກັ້ນ ການບຸກລຸກທຳລາຍປ່າໄມ້, ທີ່ດິນປ່າໄມ້ ແລະ ໄຟໄໝ້ລາມປ່າ ຢູ່ແຕ່ລະຂັ້ນຄຸ້ມຄອງຂອງຕົນ ໃນແຕ່ລະໄລຍະ ໃຫ້ເປັນຢ່າງດີ;
3. ໃນຊ່ວງໄລຍະ ເລີ່ມແຕ່ເດືອນ ທັນວາ ຫາ ເດືອນ ເມສາ ຂອງທຸກໆປີ ໃຫ້ຄະນະຮັບຜິດຊອບຂັ້ນແຂວງ ແລະ ບັນດາເມືອງ ລົງເຄື່ອນໄຫວ ໂຄສະນາ ເຜີຍແຜ່ບັນດາກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງກ່ຽວກັບ ການຕ້ານ ແລະ ສະກັດກັ້ນ ການບຸກລຸກທຳລາຍປ່າໄມ້, ທີ່ດິນປ່າໄມ້ ແລະ ໄຟໄໝ້ລາມປ່າໃຫ້ປະຊາຊົນທ້ອງຖິ່ນຮັບຮູ້ ແລະ ເຂົ້າໃຈ ຢ່າງກ້ວາງຂວາງ. ໂດຍໃຫ້ມີການລົງທະບຽນ ແລະ ເຮັດບົດບັນທຶກ ກັບ ແຕ່ລະຄອບຄົວ ທີ່ຈະຖາງໄຮ່, ຖາງສວນ ຢູ່ໃນແຕ່ລະບ້ານ ເພື່ອຮັບປະກັນໃຫ້ການນຳໃຊ້ທີ່ດິນກະສິກຳ ໄປຕາມແຜນຈັດສັນທີ່ດິນ ແລະ ແບ່ງດິນ-ແບ່ງປ່າຂອງບ້ານ;
4. ໃຫ້ແຕ່ງຕັ້ງພະນັກງານຂັ້ນເມືອງ ລົງປະຈຳຢູ່ຂັ້ນບ້ານ ເພື່ອຮັບຜິດຊອບໃນການນຳພາ ອົງການປົກຄອງບ້ານ ເຄື່ອນໄຫວຕິດຕາມ, ການທຳລາຍປ່າໄມ້, ທີ່ດິນປ່າໄມ້ປະເພດຕ່າງໆ ພ້ອມທັງ ເຝົ້າລະວັງໄຟໄໝ້ລາມປ່າ ແລະ ດັບມອດໄຟ ໃຫ້ທັນກັບສະພາບການ;
5. ໃຫ້ຄະນະສະເພາະກິດທຸກຂັ້ນ ໃຫ້ເປັນເຈົ້າການ ແລະ ເຂັ້ມງວດ ໃນການປ້ອງກັນ ແລະ ສະກັດກັ້ນການຈູດປ່າແບບຊະຊາຍ. ໃນກໍລະນີ ຫາກເກີດມີໄຟໄໝ້ລາມປ່າ ຢູ່ບ້ານໃດ, ເມືອງໃດ ແມ່ນມອບໃຫ້ບ້ານນັ້ນ, ເມືອງນັ້ນ ເປັນເຈົ້າການຈັດກຳລັງ ພ້ອມທັງ ວັດຖຸອຸປະກອນ ເພື່ອດັບມອດ ໃຫ້ທັນການ, ຮັບປະກັນບໍ່ໃຫ້ເກີດຄວາມເສຍຫາຍຮ້າຍແຮງ ແລະ ແຜ່ລາມ ເປັນບໍລິເວນກ້ວາງ;
6. ຕິດຕາມ, ກວດກາ ແລະ ເກັບກຳຂໍ້ມູນ ການທຳລາຍປ່າໄມ້, ທີ່ດິນປ່າໄມ້ ແລະ ໄຟໄໝ້ລາມປ່າ ໃຫ້ລະອຽດ ແລະ ປະຕິບັດມາດຕະການຕໍ່ຜູ້ກະທຳຜິດ ໃຫ້ເຂັ້ມງວດ.

**ມາດຕາ 7 ແຫຼ່ງງົບປະມານ ໃນການປ້ອງກັນ ແລະ ສະກັດກັ້ນໄຟໄໝ້ລາມປ່າ**

ແຫຼ່ງງົບປະມານ ໃນການປ້ອງກັນ ແລະ ສະກັດກັ້ນໄຟໄໝ້ລາມປ່າ ແມ່ນໄດ້ຈາກພາກສ່ວນ ດັ່ງນີ້:

1. ໃຫ້ຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ, ຂັ້ນເມືອງ ຖືເອົາວຽກງານປ້ອງກັນໄຟໄໝ້ລາມປ່າ ເປັນວຽກງານບຸລິມະສິດໜຶ່ງ ໃນຂົງເຂດໄພພິບັດແຫ່ງຊາດ ໂດຍໃຫ້ຈັດສັນງົບປະມານ, ກະກຽມວັດຖຸອຸປະກອນທີ່ຈຳເປັນ ເຂົ້າໃນການສະກັດກັ້ນ, ຕ້ານ ແລະ ດັບມອດໄຟໄໝ້ລາມປ່າ ໃຫ້ຢູ່ໃນທ່າກຽມພ້ອມ ແລະ ທັນເວລາ.
2. ງົບປະມານ ຈາກ ພາກສ່ວນຕ່າງໆ ຄື:
    1) ງົບປະມານ ຂອງລັດ ຕາມການຈັດສັນງົບປະມານປະຈຳປີ;
    2) ງົບປະມານ ຈາກ ກອງທຶນປົກປັກຮັກສາປ່າໄມ້;
    3) ງົບປະມານ ຈາກ ການປະກອບສ່ວນ ຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;
    4) ງົບປະມານ ຈາກ ບັນດາໂຄງການສາກົນ ທີ່ກ່ຽວຂ້ອງກັບວຽກງານປ່າໄມ້.

**ມາດຕາ 8 ເຂດຈຸດສຸມ ການຄຸ້ມຄອງປ່າໄມ້, ທີ່ດິນປ່າໄມ້ ແລະ ປ້ອງກັນໄຟໄໝ້ລາມປ່າ ມີດັ່ງນີ້:**

1. ຂັ້ນແຂວງ:

ໃຫ້ເລັ່ງໃສ່ 3 ເຂດ ບຸລິມະສິດ ຄື: (1) ເຂດປ່າສະຫງວນແຫ່ງຊາດ ພູຫີຜີ; (2) ເຂດປ່າສະຫງວນ ພູໂຫ້; (3) ເຂດປ່າປ້ອງກັນແຫ່ງຊາດ ຍອດນ້ຳແບງ-ນ້ຳມາວ ຢູ່ເຂດ 4 ບ້ານ ຄື: ບ້ານໂພນສະອາດ, ບ້ານເພຍຫົວນ້ຳ ເມືອງແບງ ແລະ ບ້ານນາຮ້ອງ, ບ້ານຫ້ວຍຮຸມ ເມືອງໄຊ ໃຫ້ມີຄວາມເຂັ້ມງວດ, ສຳລັບເຂດອື່ນໆ ໃຫ້ປະຕິບັດ ຕາມເງື່ອນໄຂຕົວຈິງ.

2. ຂັ້ນເມືອງ:

1) ເມືອງໄຊ ໃຫ້ເລັ່ງໃສ່: (1) ປ່າສະຫງວນ ພູເພີ້ຍ; (2) ເຂດສະຫງວນ ອ່າງນ້ຳ ຫ້ວຍໄລ່ (ບ້ານກໍນ້ອຍ); (3) ປ່າປ້ອງກັນ ຍອດນ້ຳຫີນ; (4) ຮ່ວມກັບຂັ້ນແຂວງ ຄຸ້ມຄອງປ່າສະຫງວນແຫ່ງຊາດ ພູຫີຜີ, ປ່າສະຫງວນ ພູໂຫ້, ປ່າປ້ອງກັນ ຍອດນ້ຳມາວ; (5) ປ່າປ້ອງກັນ ຍອດນ້ຳກໍ; (6) ປ່າຜະລິດແຫ່ງຊາດ ສາຍນ້ຳງາ (ເຂດລ້ອງນ້ຳນອນ); (7) ເຂດອື່ນໆ ຕາມເງື່ອນໄຂຕົວຈິງຂອງເມືອງ ໃຫ້ມີຄວາມເຂັ້ມງວດ;

2) ເມືອງຫຼາ ໃຫ້ເລັ່ງໃສ່: (1) ປ່າປ້ອງກັນຍອດນ້ຳ ຫ້ວຍກົດ; (2) ປ່າປ້ອງກັນ ພູບໍ່-ພູເສົາ; (3) ຮ່ວມກັບຂັ້ນແຂວງ ຄຸ້ມຄອງປ່າສະຫງວນແຫ່ງຊາດ ພູຫີຜີ, ປ່າສະຫງວນ ພູໂຫ້; (4) ເຂດອື່ນໆ ຕາມເງື່ອນໄຂຕົວຈິງຂອງເມືອງ ໃຫ້ມີຄວາມເຂັ້ມງວດ;

3) ເມືອງນາໝໍ້ ໃຫ້ເລັ່ງໃສ່: (1) ເຂດປ່າຜະລິດແຫ່ງຊາດ ຢູ່ 6 ບ້ານ ຄື: ບ້ານນ້ຳແດງ, ບ້ານຫົວນາ, ບ້ານຂວາງ, ບ້ານນາສະຫວ່າງ, ບ້ານນ້ຳເງິນ; (2) ເຂດປ່າປ້ອງກັນແຫ່ງຊາດ ພູດົງອີງ ຢູ່ 6 ບ້ານ ຄື: ບ້ານຫ້ວຍຊາງ, ບ້ານນ້ຳຂາມ, ບ້ານນາຂາມ, ບ້ານປາງທອງ, ບ້ານນ້ຳແພງ ແລະ ບ້ານນາໂຮມ; (3) ເຂດປ່າປ້ອງກັນແຫ່ງຊາດ ພູສາມເສົ້າ ຢູ່ 3 ບ້ານ ຄື: ບ້ານມຸຕື້ນ, ບ້ານນ້ຳກໍ້, ນ້ຳໂມ່ງ (4) ເຂດອື່ນໆ ຕາມເງື່ອນໄຂຕົວຈິງຂອງເມືອງ ໃຫ້ມີຄວາມເຂັ້ມງວດ;

4) ເມືອງງາ ໃຫ້ເລັ່ງໃສ່: (1) ປ່າສະຫງວນ ພູຊ້າງ; (2) ປ່າປ້ອງກັນ ອ່າງໂຕ່ງ ເຂດໜ້າເຂື່ອນໄຟຟ້ານ້ຳງາ II; (3) ເຂດສະຫງວນ ພືດເປັນຢາຂອງເມືອງ; (4) ເຂດປ່າປ້ອງກັນ ອ່າງໂຕ່ງນ້ຳປະປາຂອງເມືອງ; (5) ປ່າຜະລິດສາຍຂອງເຂດບ້ານບໍ່-ຫ້ວຍຄະ; (6) ເຂດອື່ນໆ ຕາມເງື່ອນໄຂຕົວຈິງຂອງເມືອງ ໃຫ້ມີຄວາມເຂັ້ມງວດ;

5) ເມືອງແບງ ໃຫ້ເລັ່ງໃສ່: (1) ປ່າສະຫງວນ ຕາດນ້ຳແຈ; (2) ປ່າສະຫງວນ ອ່າງໂຕ່ງນ້ຳລໍ; (3) ປ່າສະຫງວນ ຫົວງານນ້ຳປະປາຂອງເມືອງ; (4) ເຂດສະຫງວນ ແຫຼ່ງແກ່ນພັນໄມ້ດູ່; (5) ເຂດສະຫງວນ ແຫຼ່ງແກ່ນພັນໄມ້ແຕ້ຂ່າ; (6) ປ່າປ້ອງກັນ ນ້ຳແຫງ (ບ້ານໂຮມໄຊຄຳ); (7) ປ່າປ້ອງກັນ ນ້ຳງ້າວ (ບ້ານນາໂຮມ); (8) ປ່າຜະລິດ ເຂດສາຍນ້ຳແມດ (ບ້ານນາແມດ), ເຂດຍອດນ້ຳປາ (ບ້ານນາປາ); (9) ປ່າປ້ອງກັນຍອດນ້ຳພ້າວ; (10) ປ່າປ້ອງກັນ ຍອດນ້ຳລາວ; (11) ຮ່ວມກັບແຂວງ ຄຸ້ມຄອງປ່າປ້ອງກັນ ຍອດນ້ຳແບງ; (12) ເຂດອື່ນໆ ຕາມເງື່ອນໄຂຕົວຈິງຂອງເມືອງ ໃຫ້ມີຄວາມເຂັ້ມງວດ;

6) ເມືອງຮຸນ ໃຫ້ເລັ່ງໃສ່: (1) ປ່າສະຫງວນ ພູຜາດ້ອນ; (2) ປ່າປ້ອງກັນ ຕາດນ້ຳແຮງ; (3) ປ່າຍອດນ້ຳຕາດຕະແລ; (4) ປ່າສະຫງວນ ພູຫີນໝາມໝໍ່; (5) ເຂດອື່ນໆ ຕາມເງື່ອນໄຂຕົວຈິງຂອງເມືອງ ໃຫ້ມີຄວາມເຂັ້ມງວດ;

7) ເມືອງປາກແບງ ໃຫ້ເລັ່ງໃສ່: (1) ປ່າສະຫງວນ ພູມີກຊື່ນ; (2) ປ່າປ້ອງກັນ ອ່າງໂຕ່ງ ຫ້ວຍກະແສນ; (3) ເຂດສະຫງວນ 6 ໜ່ວຍພູ ອ້ອມເທດສະບານເມືອງ; (4) ເຂດອື່ນໆ ຕາມເງື່ອນໄຂຕົວຈິງຂອງເມືອງ ໃຫ້ມີຄວາມເຂັ້ມງວດ.

**ມາດຕາ 9 ຂໍ້ຫ້າມ**

1. ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກະທຳໂດຍກົງ, ຮ່ວມມື ຫຼື ຢູ່ເບື້ອງຫຼັງ ຂອງການບຸກລຸກ, ຈັບຈ່ອງ, ຊື້-ຂາຍ, ບຸກເບີກ, ຖາກຖາງ, ຈູດ, ຕັດໄມ້, ຂະຫຍາຍເນື້ອທີ່ທຳການຜະລິດ ແລະ ດຳເນີນກິດຈະການຕ່າງໆ ທີ່ບໍ່ຖືກຕ້ອງຕາມກົດໝາຍ ໃນເຂດປ່າໄມ້ ແລະ ທີ່ດິນປ່າໄມ້ ຢ່າງເດັດຂາດ;

2. ຫ້າມ ການຈັດຕັ້ງທີ່ກ່ຽວຂ້ອງຂອງລັດ ອອກອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ນຳໃຊ້ທີ່ດິນ, ດຳເນີນກິດຈະການຕ່າງໆ ຢູ່ໃນເຂດປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ບໍ່ສອດຄ່ອງຕາມກົດໝາຍ ແລະ ລະບຽບການ;
3. ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຈູດປ່າຊະຊາຍ ເພື່ອລ່າສັດປ່າ, ປູກພືດ, ປູກຫຍ້າ, ເປັນສະຖານທີ່ລ້ຽງສັດ ຫຼື ເພື່ອເປົ້າໝາຍອື່ນ ຢ່າງເດັດຂາດ;
4. ຫ້າມ ບຸກຄົນ, ນິຕິບຸກ ຫຼື ການຈັດຕັ້ງ ຍ້າຍ, ປ່ຽນແປງ ຫຼື ທຳລາຍ ເຄື່ອງໝາຍເຂດແດນປ່າສະຫງວນ, ປ່າປ້ອງກັນ ແລະ ປ່າຜະລິດ ທີ່ລັດໄດ້ຈັດສັນກຳນົດໄວ້ ຢ່າງເດັດຂາດ;
5. ບໍ່ອະນຸຍາດ ໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ດຳເນີນກິດຈະການຂຸດຄົ້ນ, ສຳຫຼວດ ແລະ ຂຸດຄົ້ນແຮ່ທາດ, ໄມ້ ແລະ ເຄື່ອງປ່າຂອງດົງ ໃນເຂດປ່າສະຫງວນ ແລະ ປ່າປ້ອງກັນ;
6. ພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 10 ການກວດກາປ່າໄມ້, ທີ່ດິນປ່າໄມ້ ແລະ ໄຟໄໝ້ລາມປ່າ**

1. ໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນເຈົ້າການ ສົມທົບກັບ ພະແນກກະສິກຳ ແລະ ປ່າໄມ້, ຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ກວດກາຄືນ ການອອກໃບຕາດິນ, ໃບຢັ້ງຢືນສິດນຳໃຊ້ທີ່ດິນ ຫຼື ໃບຢັ້ງຢືນການພັດທະນາທີ່ດິນ ແລະ ເອກະສານອື່ນກ່ຽວກັບການຄອບຄອງທີ່ດິນ, ການນຳໃຊ້, ຊື້-ຂາຍ, ການເຊົ່າ ຫຼື ສຳປະທານທີ່ດິນ ໃນເຂດທີ່ດິນປ່າໄມ້. ຖ້າຫາກເຫັນວ່າ ການອອກອະນຸຍາດ ຫຼື ການໄດ້ມາ ໂດຍບໍ່ຖືກຕ້ອງ ແມ່ນໃຫ້ສະເໜີຂັ້ນເທິງ ລົບລ້າງ ແລະ ດຳເນີນຄະດີຕາມກົດໝາຍ;
2. ໃຫ້ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ ສົມທົບກັບ ພະແນກການ, ຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ດຳເນີນກວດກາ, ເກັບກຳຂໍ້ມູນ ແລະ ແກ້ໄຂ ການທຳລາຍປ່າໄມ້, ໄຟໄໝ້ລາມປ່າ, ການຈັບຈອງ, ຊື້-ຂາຍ ທີ່ດິນປ່າໄມ້, ການດຳເນີນກິດຈະການ ຫຼື ດຳເນີນທຸລະກິດຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຢູ່ໃນຂົງເຂດປ່າໄມ້ ແລະ ທີ່ດິນປ່າໄມ້ ພາຍໃນແຂວງ ແລະ ລົງເລິກຢູ່ເຂດປ່າສະຫງວນແຫ່ງຊາດ ພູຫີຜີ, ປ່າສະຫງວນ ພູໂທ້, ເຂດປ່າປ້ອງກັນ ຍອດນ້ຳແບງ-ນ້ຳມາວ ແລະ ເຂດອື່ນໆ ທີ່ຫໍ່ແຫຼມ. ກໍລະນີພົບເຫັນ ມີການລະເມີດຜິດ ແມ່ນໃຫ້ສະເໜີຂັ້ນເທິງອອກຄຳສັ່ງໃຫ້ຢຸດຕິ, ຍຸບເລີກ, ຮື້ຖອນ, ປະຕິບັດມາດຕະການ ແລະ ດຳເນີນຄະດີຕໍ່ຜູ້ລະເມີດ ຕາມຂໍ້ຕົກລົງ ຂອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 1858/ກປ, ລົງວັນທີ 24 ມິນາ 2023, ບັນດາກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ ໃຫ້ເຂັ້ມງວດ;
3. ໃຫ້ອົງການປົກຄອງ 7 ເມືອງ ເປັນເຈົ້າການຊີ້ນຳ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ສົມທົບກັບຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ດຳເນີນກວດກາ, ເກັບກຳຂໍ້ມູນ ແລະ ແກ້ໄຂ ການທຳລາຍປ່າໄມ້, ໄຟໄໝ້ລາມປ່າ, ການຈັບຈອງ, ຊື້-ຂາຍ ທີ່ດິນປ່າໄມ້, ການດຳເນີນກິດຈະການ ຫຼື ດຳເນີນທຸລະກິດຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຢູ່ໃນຂົງເຂດປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ເມືອງຕົນຮັບຜິດຊອບ. ຖ້າພົບເຫັນມີການລະເມີດຜິດ ແມ່ນມອບໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ສະເໜີຂັ້ນເທິງ ອອກຄຳສັ່ງໃຫ້ຢຸດຕິ, ຍຸບເລີກ, ຮື້ຖອນ, ປະຕິບັດມາດຕະການ ແລະ ດຳເນີນຄະດີ ຕໍ່ຜູ້ລະເມີດ ຕາມຂໍ້ຕົກລົງ ຂອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 1858/ກປ, ລົງວັນທີ 24 ມິນາ 2023, ບັນດາກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໃຫ້ເຂັ້ມງວດ. ກໍລະນີພົບຄວາມຫຍຸ້ງຍາກ ບໍ່ສາມາດແກ້ໄຂໄດ້ ແມ່ນໃຫ້ສະເໜີ ເຖິງພະແນກກະສິກຳ ແລະ ປ່າໄມ້ ເພື່ອລົງຊ່ວຍແກ້ໄຂ ໃຫ້ທັນກັບສະພາບການ;
4. ໃຫ້ອົງການປົກຄອງແຕ່ລະບ້ານ ເປັນເຈົ້າການຊີ້ນຳຄະນະຮັບຜິດຊອບຄຸ້ມຄອງປ່າໄມ້ບ້ານ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງຂັ້ນບ້ານ ດຳເນີນການກວດກາ, ເກັບກຳຂໍ້ມູນ ການທຳລາຍປ່າໄມ້, ໄຟໄໝ້ລາມປ່າ, ການຈັບຈອງທີ່ດິນປ່າໄມ້, ການດຳເນີນກິດຈະການ ຫຼື ດຳເນີນທຸລະກິດຂອງບຸກຄົນ,

ນິຕິບຸກຄົນ ຫຼື ການຈັດຕັ້ງ ຢູ່ໃນຂົງເຂດປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ບ້ານຕົນຮັບຜິດຊອບ. ກໍລະນີພົບເຫັນມີການລະເມີດຜິດ ແມ່ນໃຫ້ສະເໜີ ເຖິງຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ ລົງຊ່ວຍແກ້ໄຂໃຫ້ເຂັ້ມງວດ ແລະ ທັນກັບສະພາບການ.

**ມາດຕາ 11 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫາກລະເມີດ ຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ ໃຊ້ແທນຄ່າເສຍຫາຍ, ລົງວິໄນ, ປັບໃໝ ແລະ ດໍາເນີນຄະດີຕາມ ກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

**ມາດຕາ 12 ການຈັດຕັ້ງປະຕິບັດ**

ໃຫ້ບັນດາພະແນກການ, ອົງການຈັດຕັ້ງທຸກພາກສ່ວນ ທີ່ກ່ຽວຂ້ອງ ເປັນເຈົ້າການ ອອກຄໍາແນະນໍາຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ເຂັ້ມງວດ.

**ມາດຕາ 13 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ເຈົ້າແຂວງ**

ແຂວງອຸດົມໄຊ

ເຈົ້າແຂວງ

ບຸນຄົງ ຫຼ້າຈຽມພອນ